ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110



# ທະນາຄານແຫ່ງ ສປປ ລາວ ສືບຕໍ່ເອົາໃຈໃສ່ບຸກບືນແກ້ໄຂບັນຫາເສດຖະກິດ ທີ່ຕິດພັນກັບຂະແໜງການຂອງຕົນ




ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 31 ຕຸລາ 2023 ທີ່ຜ່ານມາ ແລະ ຈະໄດ້ດຳເນີນໄປຈົນເຖິງວັນທີ 21 ພະຈິກ 2023. ໂດຍການເປັນປະທານຂອງພະນະທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍການເຂົ້າຮ່ວມຂອງການນຳ ພັກ-ລັດ ຂັ້ນສູງ ແລະ ສະມາຊິກສະພາແຫ່ງຊາດ (ສສຊ) ເຂົ້າຮ່ວມຢ່າງພ້ອມພຽງ. ໃນໂອກາດນີ້, ທະນາຄານແຫ່ງ ສປປ ລາວ (ທຫລ) ໂດຍແມ່ນ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທຫລ ໄດ້ຂຶ້ນລາຍງານສະພາບການຈັດຕັ້ງປະຕິບັດແຜນເງິນຕາໃນໄລຍະກາງສະໄໝ ຕໍ່ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX (2021-2025) ແລະ ທິດທາງທ້າຍສະໄໝຮອດປີ 2025, ການຈັດຕັ້ງປະຕິບັດແຜນເງິນຕາປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຕໍ່ກອງປະຊຸມ. ໃນນີ້ ທຫລ ໄດ້ສູ້ຊົນປະຕິບັດທຸກມາດຕະການ ແລະ ນຳໃຊ້ທຸກເຄື່ອງມືທີ່ມີຢ່າງປະສົມປະສານ ແລະ ມີໄຫວພິບ ເພື່ອຕອບຕ້ານກັບບັນຫາເສດຖະກິດທີ່ກຳລັງເປັນບັນຫາເຄັ່ງຮ້ອນ ແລະ ຮີບດ່ວນ ເຊິ່ງເລີ່ມແຕ່ໄລຍະກາງປີ 2022 ເປັນຕົ້ນມາ, ທຫລ ໄດ້ຫັນທິດທາງການດຳເນີນນະໂຍບາຍເງິນຕາ ຈາກຜ່ອນຄາຍມາເປັນຮັດກຸມ ໂດຍໄດ້ປັບເພີ່ມອັດຕາດອກເບ້ຍພື້ນຖານຂອງ ທຫລ ສະກຸນເງິນກີບ ໄລຍະສັ້ນບໍ່ເກີນ 7 ວັນ 3 ຄັ້ງ ຈາກ 3%/ປີ ມາເປັນ 7,5%/ປີ; ໄດ້ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບ 3 ຄັ້ງ ຄື: ຈາກ 3% ເປັນ 8% ສຳລັບສະກຸນເງິນກີບ ແລະ ຈາກ 5% ມາເປັນ 10% ສຳລັບສະກຸນເງິນຕາຕ່າງປະເທດ; ອອກ ແລະ ຈຳໜ່າຍພັນທະບັດ ທຫລ ໄລຍະສັ້ນໃຫ້ແກ່ມວນຊົນ 5 ຄັ້ງ ໃນວົງເງິນ 12.000 ຕື້ກີບ ແລະ ອອກຜະລິດຕະພັນເງິນຝາກປະຈຳ ທຫລ ໄລຍະ 7 ວັນ ແລະ ພັນທະບັດ ທຫລ ໄລຍະສັ້ນ ໃນຕະຫຼາດເປີດ ຈຳນວນ 4.000 ຕື້ກີບ; ປະກອບສ່ວນໃນການແກ້ໄຂສະພາບຄ່ອງດ້ານ

ງົບປະມານພາຍໃຕ້ກອບກົດໝາຍ ດ້ວຍການຈັດຕັ້ງປະຕິບັດການປະມູນພັນທະບັດຄັງເງິນຢູ່ ທຫລ ເພື່ອຈຳໜ່າຍໃຫ້ທະນາຄານທຸລະກິດ ແລະ ກອງທຶນຕ່າງໆ; ຄົ້ນຄວ້າແກ້ໄຂບັນຫາດ້ານແຫຼ່ງທຶນທີ່ຕິດພັນກັບການປັບປຸງໂຄງສ້າງທະນາຄານທຸລະກິດ; ສືບຕໍ່ປະກອບສ່ວນແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ແລະ ໄດ້ອອກນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ແລະ ສິນເຊື່ອເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ໂດຍໄດ້ອອກຂໍ້ຕົກລົງ 4 ສະບັບ, ຮອດທ້າຍເດືອນ 9/2023 ມີ 17 ທະນາຄານທຸລະກິດທີ່ສະແດງເຈດຈຳນົງເຂົ້າຮ່ວມຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອດັ່ງກ່າວ ແລະ ມີຫົວໜ່ວຍທຸລະກິດຈຳນວນໜຶ່ງ (3 ລາຍ) ສະເໜີຂໍນະໂຍບາຍສົມທຽບດອກເບ້ຍ; ປະກອບສ່ວນປະຕິບັດການແກ້ໄຂບັນຫາໜີ້ໂຄງການລົງທຶນຂອງລັດ ດ້ວຍຮູບການອວ່າຍໜີ້ 3 ແຈ ໂດຍໄດ້ຮັບຊື້ພັນທະບັດບ້ວງອວ່າຍໜີ້ 3 ແຈ ຈຳນວນຫນຶ່ງ ເພື່ອຊ່ວຍເພີ່ມສະພາບຄ່ອງໃຫ້ແກ່ທະນາຄານທຸລະກິດ ແລະ ສ້າງເງື່ອນໄຂໃຫ້ທະນາຄານທຸລະກິດ ສາມາດສະໜອງສິນເຊື່ອໃຫ້ພາກສ່ວນເສດຖະກິດໄດ້ຫຼາຍຂຶ້ນ. ນອກຈາກນີ້, ທຫລ ຍັງໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດໃນທິດທາງຍືດຢຸ່ນຂຶ້ນ ໂດຍຂະຫຍາຍຂອບການກຳນົດອັດຕາແລກປ່ຽນທຽບກັບອັດຕາແລກປ່ຽນອ້າງອີງຂອງ ທຫລ ຈຳນວນ 3 ຄັ້ງຄື: ຈາກລະດັບ =0,25% ມາເປັນ ±7,5%; ຄຽງຄູ່ກັບການຊຸກຍູ້ສົ່ງເສີມບັນດາທະນາຄານທຸລະກິດ ຂະຫຍາຍການບໍລິການແລກປ່ຽນເງິນຕາດ້ວຍຫຼາຍຮູບແບບ ທັງໜ່ວຍບໍລິການແລກປ່ຽນ, ຕູ້ແລກປ່ຽນເງິນຕາ ແລະ ຕູ້ກົດເງິນສົດເງິນຕາຕ່າງປະເທດອັດຕະໂນມັດ ຕາມຈຸດຍຸດທະສາດຕ່າງໆ ລວມທັງອອກລະບຽບການເປີດໃຫ້ທະນາຄານທຸລະກິດນຳໃຊ້ເຄື່ອງມືທັນສະໄໝ ເພື່ອອຳນວຍຄວາມສະດວກໃຫ້ລູກຄ້າສາມາດແລກປ່ຽນເງິນຕາຜ່ານເຄື່ອງມືດັ່ງກ່າວ. ໃນໄລຍະກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ທຫລ ໄດ້ສຸມໃສ່ການແກ້ໄຂບັນຫາການຂາດດຸນການຊຳລະກັບຕ່າງປະເທດ (ລາຍຮັບຈາກການສົ່ງອອກບໍ່ໄດ້ນຳກັບມາ ສປປ ລາວ ຫຼາຍເທົ່າທີ່ຄວນ), ບັນຫາໜີ້ສິນຕໍ່ຕ່າງປະເທດສະສົມ ແຕ່ຄັງສຳຮອງຢູ່ໃນລະດັບຕໍ່າເປັນແຮງກົດດັນໃຫ້ອັດຕາແລກປ່ຽນຜັນຜວນ, ມີປະກົດການປັ່ນປ່ວນອັດຕາແລກປ່ຽນຢູ່ພາຍໃນ; ຊຸກຍູ້ສົ່ງເສີມການນຳໃຊ້ເງິນກີບ, ການຄຸ້ມຄອງກະແສເງິນເຂົ້າ-ອອກປະເທດຈາກການຄ້າ, ການບໍລິການ, ການລົງທຶນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ພ້ອມນັ້ນ, ກໍ່ໄດ້ສ້າງຕັ້ງຫ້ອງການຕົວແທນ ທຫລ ປະຈຳເຂດເສດຖະກິດພິເສດບໍ່ເຕ່ນ ແລະ ສາມຫຼ່ຽມຄຳ ເພື່ອປະຕິບັດພາລະບົດບາດໃນການຄຸ້ມຄອງເງິນຕາຕ່າງປະເທດຢູ່ສອງເຂດດັ່ງກ່າວ. ໃນນັ້ນ, ໄດ້ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດຢ່າງມີຍຸດທະສາດ ແລະ ແບບແຜນຫຼາຍຂຶ້ນກວ່າເກົ່າ ໂດຍໄດ້ປັບປຸງໂຄງສ້າງຄັງສຳຮອງເງິນຕາຕ່າງປະເທດໃຫ້ມີຫຼາຍສະກຸນເງິນ ແລະ ເພີ່ມອົງປະກອບຄຳ ເພື່ອຮອງຮັບກັບຄວາມຜັນຜວນຂອງຕະຫຼາດການເງິນໃນສາກົນ ແລະ ສອດຄ່ອງກັບໂຄງສ້າງການຄ້າຕ່າງປະເທດ ແລະ ການລົງທຶນຂອງ ສປປ ລາວ; ໄດ້ມີມາດຕະການໃນການບຸກຫຼາຍຂຶ້ນກັບຫົວໜ່ວຍຜູ້ປະກອບການປະເພດຕ່າງໆ ໂດຍສະເພາະຜູ້ນຳເຂົ້າ-ສົ່ງອອກ ແລະ ການລົງທຶນໂດຍກົງຈາກຕ່າງປະເທດເພື່ອຊຸກຍູ້ໃຫ້ນຳລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກ ເຂົ້າມາ ສປປ ລາວ ໃຫ້ຫຼາຍຂຶ້ນກວ່າໄລຍະຜ່ານມາ. ຄຽງຄູ່ກັນນັ້ນ, ກໍ່ໄດ້ເອົາໃຈໃສ່ສົ່ງເສີມການນຳໃຊ້ເງິນກີບ ແລະ ຊຸກຍູ້ການນຳໃຊ້ເງິນຕາຕ່າງປະເທດໃຫ້ຜ່ານລະບົບທະນາຄານ ໂດຍໄດ້ຈັດຕັ້ງຈັດກອງປະຊຸມເຜີຍແຜ່ນິຕິກຳວຽກງານຄຸ້ມຄອງເງິນຕາຕ່າງປະເທດ 13 ຄັ້ງ ຢູ່ສູນກາງ ແລະ ທ້ອງຖິ່ນ. ນອກຈາກນີ້, ທ່ານຜູ້ວ່າການ ທຫລ ຍັງໄດ້ລາຍງານຜົນການຈັດຕັ້ງປະຕິບັດວຽກງານດ້ານອື່ນໆຕື່ມອີກຫຼາຍດ້ານ. ຈາກການຈັດຕັ້ງປະຕິບັດມາດຕະການຕ່າງໆ ທີ່ກ່າວມາຂ້າງເທິງເຫັນວ່າ ຜົນໄດ້ຮັບອັນພົ້ນເດັ່ນແມ່ນສາມາດປ້ອງກັນບໍ່ໃຫ້ເສດຖະກິດຂອງ ສປປ ລາວ ກ້າວເຂົ້າສູ່ພາວະວິກິດ, ເຖິງວ່າອັດຕາເງິນເຟີ້ຍັງສູງ ແລະ ອັດຕາແລກປ່ຽນຍັງຜັນຜວນ. ແຕ່ ທຫລ ກໍ່ສາມາດຄົ້ນຄວ້າສາເຫດ ແລະ ກຳນົດມາດຕະການແກ້ໄຂຖືກທິດທາງ ໂດຍປັບປຸງການຄຸ້ມຄອງເງິນຕາຕ່າງປະເທດ ພາໃຫ້ເລີ່ມມີຜົນໄດ້ຮັບທີ່ຕັ້ງຫນ້າຄື: ລາຍຮັບຈາກການສົ່ງອອກ ໂອນກັບ ສປປ ລາວ ເພີ່ມຂຶ້ນຈາກປະມານ 31% ໃນທ້າຍປີ 2020 ມາເປັນ 41,32% ໃນ 9 ເດືອນ 2023 (ຄາດຄະເນໝົດປີ 2023 ຈະໃຫ້ບັນລຸ 50%); ຄັງສຳຮອງເງິນຕາຕ່າງປະເທດເພີ່ມຂຶ້ນ ສາມາດກຸ້ມການນຳເຂົ້າໄດ້ 4,3 ເດືອນໃນເດືອນ 9/2023 ຈາກ 3,6 ເດືອນໃນທ້າຍປີ 2022; ຍອດເຫຼືອເງິນຝາກຂອງທະນາຄານທຸລະກິດ ຕໍ່ GDP ຢູ່ໃນລະດັບ 101,22%; ອັດຕາສ່ວນສິນເຊື່ອທຽບໃສ່ GDP ເພີ່ມຂຶ້ນຈາກ 45,25% ໃນທ້າຍປີ 2020 ມາເປັນ 64,46% ໃນ 9 ເດືອນປີ 2023; ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs) ຢູ່ໃນລະດັບ 1.68% (ຂໍ້ມູນຮອດເດືອນ 8/2023), ໃນນັ້ນ ສະເພາະປີ 2023 ສິນເຊື່ອຂະຫຍາຍຕົວເພີ່ມຂຶ້ນ 15% ອັນໄດ້ປະກອບສ່ວນເຮັດໃຫ້ເສດຖະກິດ ຟື້ນຟູດີຂຶ້ນ.



ພາຍຫຼັງສຳເລັດການລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX ແລ້ວ, ໃນວັນທີ 2 ແລະ 3 ພະຈິກ ທ່ານຜູ້ວ່າການ ທຫລ ໄດ້ຊີ້ແຈງຕໍ່ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ. ໂດຍສະເພາະແມ່ນການປະກອບຄຳເຫັນ ແລະ ຄຳຖາມເຈາະຈີ້ມ ຊຶ່ງປະກອບມີ: ຄຳຖາມເຈາະຈີ້ມຂອງ**ທ່ານປະທານສະພາແຫ່ງຊາດ 6 ຄຳຖາມເຈາະຈີ້ມ, ທ່ານຮອງປະທານສະພາແຫ່ງຊາດ 2 ຄຳເຫັນ ແລະ ຄຳຖາມເຈາະຈີ້ມຈາກ ຜູ້ແທນທັງໝົດ 15 ຄຳຖາມ** ຊຶ່ງຕົ້ນຕໍແມ່ນຕິດພັນກັບການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນເງິນຕາກາງສະໄໝໃນປີ 2023 ແລະ ເປັນບັນຫາສຳຄັນເຄັ່ງຮ້ອນ. ໂດຍທ່ານໄດ້ໃຫ້ຄຳຊີ້ແຈ້ງໂດຍຫຍໍ້ຕໍ່ກັບບັນຫາຕ່າງໆເຊັ່ນ: **ຕໍ່ກັບບັນຫາການຮັກສາສະຖຽນລະພາບດ້ານເງິນຕາເປັນຕົ້ນ ອັດຕາແລກປ່ຽນ ແລະ ເງິນເຟີ້ ໃຫ້ໄດ້ຕາມມະຕິສະພາ**, ຊຶ່ງສາເຫດທີ່ຍັງບໍ່ສາມາດບັນລຸໄດ້ມາຈາກສາເຫດພາຍໃນຊຶ່ງປະກອບມີ 4 ສາຍເຫດ ຄື: ❶ ຂາດດຸນເງິນຕາຕ່າງປະເທດ ໂດຍສະເພາະດຸນຊຳລະປົກກະຕິ; ❷ ຄັງສຳຮອງເງິນຕາຕ່າງປະເທດ ຍັງຕໍ່າເກີນໄປ (ບໍ່ສາມາດດັດສົມໄດ້); ❸ ເຄື່ອງມືນະໂຍບາຍເງິນຕາ ບໍ່ມີປະສິດທິຜົນເທົ່າທີ່ຄວນ; ❹ ນິຕິກຳ ແລະ ກົນໄກການຄຸ້ມຄອງເງິນຕາຕ່າງປະເທດ ບໍ່ໄດ້ພັດທະນາຄົບຊຸດ. **<u>ນອກນັ້ນ</u>**, ຍັງມີປັດໄຈອື່ນທີ່ບໍ່ຂຶ້ນກັບຄວາມຮັບຜິດຊອບຂອງ ທະນາຄານແຫ່ງ ສປປ ລາວ ຄື: ການຄຸ້ມຄອງລາຄາສິນຄ້າ, ການຄຸ້ມຄອງລະບົບການຄ້າ, ການຜະລິດພາຍໃນສົມທົບກັບເສດຖະກິດຂອງ ສປປ ລາວ ເປັນເສດຖະກິດນຳໃຊ້ຫຼາຍສະກຸນເງິນ ແລະ ສັງຄົມຕິດພັນກັບການນຳໃຊ້ເງິນຕາຢ່າງເສລີ ສົມທົບກັບປັດໄຈພາຍນອກໄດ້ເກີດມີສະພາບຄວາມຕ້ອງການເງິນຕາເພີ່ມສູງຂຶ້ນແບບກ້າວກະໂດດຈາກການເພີ່ມຂຶ້ນຂອງລາຄານ້ຳມັນໃນຕະຫຼາດໂລກ; ເກີດສະພາບການລະບາດຂອງພະຍາດໂຄວິດ-19 ແກ່ຍາວ 2 ປີເຄິ່ງ ເຮັດໃຫ້ດຸນຊຳລະຕ່າງປະເທດຂາດດຸນເພີ່ມຂຶ້ນຈາກການປິດປະເທດ, ການລົງທຶນໂດຍກົງຈາກຕ່າງປະເທດ (FDI) ຫຼຸດລົງ, ແຕ່ມີຄວາມຕ້ອງການເງິນຕາຕ່າງປະເທດເພີ່ມຂຶ້ນ ເພື່ອຊຳລະໜີ້ສິນຕ່າງປະເທດ. ຈາກເຫດຜົນດັ່ງກ່າວເຮັດໃຫ້: ເກີດຄວາມບໍ່ສົມດຸນ ລະຫວ່າງ ຄວາມຕ້ອງການ ແລະ ການສະໜອງເງິນຕາໃນເສດຖະກິດ, ອັດຕາແລກປ່ຽນເລີ່ມກົດດັນ ແລະ ອ່ອນຄ່າລົງ ແລະ ແກ່ຍາວ ພາໃຫ້ເກີດສະພາບຈິດຕະສາດ (ສັງຄົມ) ໃນການຮັກສາ ແລະ ກັກຕຸນເງິນຕາຫຼາຍກວ່າ ເຮັດໃຫ້ເກີດມີການແຕ່ງເພີ່ມຄວາມຕ້ອງການເງິນຕາ ແລະ ເພີ່ມການຂາດດຸນເງິນຕາ ຈົນເຮັດໃຫ້ອັດຕາແລກປ່ຽນຜັນຜວນ ແລະ ເຮັດໃຫ້ເງິນກີບສືບຕໍ່ອ່ອນຄ່າ. ເພື່ອແກ້ໄຂສະພາບດັ່ງກ່າວ, ທະນາຄານແຫ່ງ ສປປ ລາວ ໄດ້ເລັ່ງປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ນິຕິກຳໃຕ້ກົດໝາຍໃນກາງປີ 2022 ແລະ ຖືກຮັບຮອງເອົາໃນທ້າຍປີ 2022, ໄດ້ຜັນຂະຫຍາຍສ້າງນິຕິກຳໃຕ້ກົດໝາຍຕື່ມອີກໄດ້ຫຼາຍກວ່າ 10 ສະບັບ, ແຕ່ການຈັດຕັ້ງປະຕິບັດ ຍັງບໍ່ທັນສາມາດປະຕິບັດໄດ້ດີ, ສາເຫດເນື່ອງຈາກວ່າ ສະພາບອັດຕາແລກປ່ຽນຍັງບໍ່ສະຫງົບ, ຖ້າມີການເຂັ້ມງວດເຄັ່ງຄັດເກີນໄປ ອາດສ້າງຄວາມແຕກຕື່ນ ແລະ ເກີດສະພາບແຕກຕື່ນໃນສັງຄົມ. ສະນັ້ນ, ທະນາຄານແຫ່ງ ສປປ ລາວ ພາຍໃຕ້ການຊີ້ນຳຂອງລັດຖະບານ ຈຶ່ງໄດ້ດຳເນີນການຢ່າງລະມັດລະວັງ ເພື່ອໃຫ້ສັງຄົມເຂົ້າໃຈເຖິງຄວາມຈຳເປັນ ແລະ ພ້ອມກັນເຂົ້າຮ່ວມແກ້ໄຂບັນຫາສະພາບເງິນຕາຮ່ວມກັນທົ່ວສັງຄົມ. ເຊິ່ງໃນປີ 2023 ເປັນປີທີ່ມີຄວາມຫຼົ່ງແຫຼມ ແລະ ທ້າທາຍຫຼາຍດ້ານ ເນື່ອງຈາກວ່າ ຖານະເງິນຕາຂອງ ປະເທດແມ່ນອ່ອນແອ (ຂາດດຸນເງິນຕາ ບວກກັບ ຄັງສຳຮອງເງິນຕາຕ່າງປະເທດຕໍ່າ). ສະນັ້ນ, ວຽກທີ່ທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງປະຕິບັດ ແລະ ຈະສືບຕໍ່ຈັດຕັ້ງປະຕິບັດມີຄື:

- ດຳເນີນນະໂຍບາຍຢ່າງຮັດກຸມ ເພື່ອປະສິດທິພາບເຄື່ອງມືເງິນຕາໃຫ້ສູງຂຶ້ນ (ອັດຕາດອກເບ້ຍພື້ນຖານ, ເງິນແຮຝາກບັງຄັບ, ພັນທະບັດ, ຕະຫຼາດປິດ);

- ເກັບຊື້ເງິນຕາຈາກເສດຖະກິດໃນຊ່ວງເງິນຕາເຫຼືອເພື່ອສ້າງຄວາມເຂັ້ມແຂງໃຫ້ຄັງສຳຮອງເງິນຕາໄວ້ດັດສົມສິນຄ້າທີ່ຈຳເປັນ (ນ້ຳມັນເຊື້ອໄຟ ແລະ ອື່ນໆ);
- ສືບຕໍ່ຫັນການແລກປ່ຽນເຂົ້າລະບົບທະນາຄານ, ຊຸກຍູ້ໃຫ້ທະນາຄານທຸລະກິດສ້າງລະບົບແລກປ່ຽນໃຫ້ກວ້າງຂວາງທົ່ວສັງຄົມ, ສະດວກ ແລະ ເຂົ້າເຖິງງ່າຍ;
- ສົມທົບກັບ ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບໃນການກວດກາບຸກຄົນ ແລະ ກຸ່ມຄົນທີ່ເຄື່ອນໄຫວແລກປ່ຽນເງິນຕາບໍ່ ຖືກຕ້ອງຕາມລະບຽບກົດໝາຍ;
- ຮີບຮ້ອນເຮັດວຽກກັບບໍລິສັດສົ່ງອອກສິນຄ້າ ເພື່ອໃຫ້ເຂົ້າໃຈສະພາບຂອງແຕ່ລະຂະແໜງການ, ເກັບກຳຂໍ້ມູນ, ຄົ້ນຄວ້າກົນໄກຕິດຕາມສ້າງລະບຽບນິຕິກຳການລົງທຶນໂດຍກົງຈາກຕ່າງປະເທດ (FDI), ເຮັດໃຫ້ເງິນຕາເຂົ້າຜ່ານລະບົບໃຫ້ຫຼາຍຂຶ້ນ;
- ຮັບປະກັນຄວາມໝັ້ນຄົງຂອງລະບົບທະນາຄານ ແລະ ສະຖາບັນການເງິນ ໃຫ້ມີຄວາມເຂັ້ມແຂງຫຼາຍຂຶ້ນ.

ນອກຈາກນີ້, ທະນາຄານແຫ່ງ ສປປ ລາວ ໄດ້ສຸມໃສ່ການສະໜອງສິນເຊື່ອໃຫ້ເສດຖະກິດ ເຊິ່ງໃນປີ 2023 (9 ເດືອນ) ສິນເຊື່ອທົ່ວລະບົບທະນາຄານຂະຫຍາຍຢູ່ປະມານ 13% ແລະ ໝົດປີຄາດວ່າຈະຢູ່ໃນລະດັບ 10% - 17%; ແຕ່ຈຸດທີ່ຕ້ອງເອົາໃຈໃສ່ແມ່ນສິນເຊື່ອຂະແໜງກະສິກຳທີ່ຍັງຂະຫຍາຍໂຕຊ້າ; ພ້ອມທັງໄດ້ປ່ອຍສິນເຊື່ອໃຫ້ແກ່ຂະແໜງກະສິກຳ ແລະ ແກ້ໄຂຄວາມທຸກຍາກ ໂດຍປ່ອຍຜ່ານກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ-ກາງ (SMEs), ນະໂຍບາຍສິນເຊື່ອ ເພື່ອກະຕຸ້ນເສດຖະກິດ ແລະ ນະໂຍບາຍກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ແລະ ທະນາຄານນະໂຍບາຍ ໃນ 17 ແຂວງ, ນະຄອນຫຼວງ, 72 ເມືອງ, 3.775 ບ້ານ; ໃນນີ້, ບ້ານທຸກຍາກ 1.340 ບ້ານ, ຈັດຕັ້ງກຸ່ມກູ້ຢືມໄດ້ 27.830 ກຸ່ມ ແລະ 38.350 ຄອບຄົວ. ແລະ ບັນຫາທີ່ປະຊາຊົນທຸລະກິດຂະໜາດນ້ອຍພົບພໍ້ບັນຫາ ແມ່ນບັນຫາການເຂົ້າເຖິງແຫຼ່ງທຶນຍາກ ເພາະບໍ່ມີການຖືບັນຊີ, ບໍ່ມີຫຼັກຊັບຄໍ້າປະກັນ, ປະຕິບັດພັນທະອາກອນບໍ່ຖືກລະບຽບ; ຊຶ່ງເປັນບັນຫາທີ່ຕ້ອງໄດ້ອາໄສການແກ້ໄຂຮ່ວມກັນ, ຮັບປະກັນຄວາມສ່ຽງການປ່ອຍກູ້ ແລະ ສາມາດກູ້ຢືມໄດ້; ໂດຍກຳລັງດຳເນີນການສ້າງກົນໄກເພີ່ມແທນ ກໍ່ຄືການກໍ່ຕັ້ງບໍລິສັດປະເມີນຊັບສິນ.

ນອກຈາກນີ້, ທ່ານຜູ້ວ່າການ ທຫລ ຍັງໄດ້ຊີ້ແຈງເພີ່ມເຕີມກ່ຽວກັບຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິ-ນ ໂດຍສະເພາະການຈັດຕັ້ງປະຕິບັດຄາດໝາຍທາງດ້ານເງິນຕາ ທີ່ກຳນົດໄວ້ໃນມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ-ເງິນຕາ ຮອດປີ 2023 (ສະບັບເລກທີ 03/ສພຊ, ລົງວັນທີ 10/08/2021) ເປັນຕົ້ນ: ຄັງສຳຮອງເງິນຕາຕ່າງປະເທດ, ສ່ວນຕ່າງອັດຕາແລກປ່ຽນຂອງທະນາຄານ ແລະ ຕະຫຼາດ ແລະ ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs), ມາຮອດປັດຈຸບັນຜ່ານການຈັດຕັ້ງປະຕິບັດບັນດາມາດຕະການດ້ານນະໂຍບາຍເງິນຕາໃນໄລຍະ 2 ປີເຄິ່ງຜ່ານມາ ຈົນຮອດທ້າຍເດືອນ ກັນຍາ 2023, ໃນຈຳນວນ 5 ຄາດໝາຍ ທະນາຄານແຫ່ງ ສປປ ລາວ ສາມາດປະຕິບັດບັນລຸໄດ້ 4 ຄາດໝາຍ ແລະ ບໍ່ສາມາດບັນລຸໄດ້ 1 ຄາດໝາຍ ຄື:

1) ລະດັບຄັງສຳຮອງເງິນຕາຕ່າງປະເທດ ກ່ອນການຮັບຮອງວາລະແຫ່ງຊາດ ແມ່ນກຸ້ມນຳເຂົ້າໄດ້ 3,64 ເດືອນ ແຕ່ໃນເດືອນ 9/2023 ສາມາດກຸ້ມການນຳເຂົ້າໄດ້ 4,3 ເດືອນ (ຄາດໝາຍ: ບໍ່ໃຫ້ຫຼຸດ 3 ເດືອນ);
2) ສາມາດຮັກສາອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs)ໃນລະບົບທະນາຄານ ກ່ອນການຮັບຮອງວາລະແຫ່ງຊາດຢູ່ໃນລະດັບ 2,82%, ແຕ່ໃນເດືອນ 9/2023 ຢູ່ໃນລະດັບ 1,6% (ຄາດໝາຍ: ບໍ່ເກີນ 3%);
3) ຍອດເຫຼືອເງິນຝາກຂອງທະນາຄານທຸລະກິດ ຕໍ່ GDP ກ່ອນການຮັບຮອງວາລະແຫ່ງຊາດ ຢູ່ໃນລະດັບ65,52% ແຕ່ໃນເດືອນ 9/2023 ຢູ່ໃນລະດັບ 101,22% (ຄາດໝາຍ: 85%);
4) ຍອດສິນເຊື່ອທຽບໃສ່ GDP ເພີ່ມຂຶ້ນຈາກກ່ອນການຮັບຮອງວາລະແຫ່ງຊາດຢູ່ໃນລະດັບ 46,26% ມາເປັນ 64,46% ໃນເດືອນ 9/2023 (ຄາດໝາຍ:65%);
5) ສຳລັບ ຄາດໝາຍທີ່ບໍ່ສາມາດ ບັນລຸໄດ້ ແມ່ນການຄຸ້ມຄອງອັດຕາແລກປ່ຽນ.

ຕໍ່ກັບບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ-ທີ່ເປັນບັນຫາສຳຄັນເລັ່ງຮ້ອນ ໃນປັດຈຸບັນ ທະນາຄານແຫ່ງ ສປປ ລາວ ຈະໄດ້ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດຄາດໝາຍການຂະຫຍາຍຕົວ ຂອງປະລິມານເງິນ M2 ທີ່ໄດ້ກຳນົດຢູ່ໃນລະດັບ 25% ຊຶ່ງໃນນັ້ນແມ່ນ : ຂະຫຍາຍເຂົ້າສູ່ຂົງເຂດສິນເຊື່ອໃຫ້ເພື່ອໃຫ້ບັນລຸໄດ້ແຜນການຊຸກຍູ້ການຂະຫຍາຍຕົວສິນເຊື່ອທີ່ໄດ້ວາງໄວ້ ໃຫ້ໄດ້ ປະມານ 18

-20% ພ້ອມດ້ວຍການຈັດຕັ້ງປະຕິບັດ 2 ນະໂຍບາຍສິນເຊື່ອ ຂອງລັດຖະບານຕາມຂໍ້ຕົກລົງ ສະບັບເລກທີ 93/ນຍ ກໍ່ຄືນະໂຍບາຍ : ນະໂຍບາຍສິນ ສິນເຊື່ອ ເພື່ອກະຕຸ້ນເສດຖະກິດ ແລະເຊື່ອ ເພື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ແລະ ສິນເຊື່ອທີ່ປ່ອຍຜ່ານ ທະນາຄານນະໂຍບາຍ. ເຊິ່ງການປະຕິບັດນະໂຍບາຍທັງໝົດນີ້ແມ່ນແນໃສ່ເພື່ອສ້າງເງື່ອນໄຂໃຫ້ຫົວໜ່ວຍທຸລະກິດໃນຂະແໜງເສດຖະກິດປາຍແຫຼມ ແລະ ຂະແໜງບູລິມະສິດຂອງແຂວງສາມາດເຂົ້າຫາແຫຼ່ງທຶນທີ່ມີຕົ້ນທຶນເໝາະສົມເພື່ອນໍາໃຊ້ເຂົ້າໃນການສ້າງ, ຂະຫຍາຍ ແລະປັບປຸງຖານການຜະລິດ-ປຸງແຕ່ງ, ບໍລິການ-ການຄ້າຂອງຕົນທັງປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບມະຫາພາກດ້ານການເງິນ-ເງິນຕາໃຫ້ເຂັ້ມແຂງແລະການພັດທະນາເສດຖະກິດໃຫ້ມີການຂະຫຍາຍຕົວແບບຍືນຍົງ. ພ້ອມນີ້, ທຫລ ກໍ່ຈະໄດ້ສຸມໃສ່ ❶ປັບປຸງລະບຽບການ ແລະ ນິຕິກໍາທີ່ກ່ຽວຂ້ອງ ;❷ ປັບປຸງລະບົບສະຖິຕິສິນເຊື່ອຂະແໜງກະສິກໍາ ແລະ SMEs ໃຫ້ຄົບຖ້ວນ, ຖືກຕ້ອງ ແລະສອດຄ່ອງ ❸ ຄຸ້ມຄອງໜີ້ບໍ່ເກີດດອກອອກຜົນໃຫ້ສອດຄ່ອງກັບ ການຂະຫຍາຍຕົວຂອງສິນເຊື່ອ; ❹ ປັບປຸງວຽກງານຂໍ້ມູນຂ່າວສານສິນເຊື່ອໃນການໃຫ້ຄະແນນຄວາມໜ້າເຊື່ອຖືສິນເຊື່ອຕໍ່ບຸກຄົນ ແລະ ນິຕິບຸກຄົນ;❺ສ້າງຕັ້ງບໍລິສັດ ຄໍ້າປະກັນສິນເຊື່ອ ແລະ ❻ກະກຽມເປີດກະດານ SME ຢູ່ໃນຕະຫຼາດຫຼັກຊັບລາວ.

ເພື່ອເປັນການປະຕິບັດຕາມນະໂຍບາຍຂອງລັດຖະບານ, ທຫລ ແມ່ນໄດ້ເອົາໃຈໃສ່ຢ່າງຕັ້ງໜ້າໃນການຄຸ້ມຄອງ ແລະ ຊຸກຍູ້ໃຫ້ສະຖາບັນການເງິນ ສະໜອງສິນເຊື່ອໃຫ້ແກ່ບັນດາຫົວໜ່ວຍທຸລະກິດຢ່າງມີປະສິດທິພາບ ແລະ ຮັບປະກັນຄວາມໝັ້ນຄົງຂອງສະຖາບັນການເງິນ ໂດຍສະເພາະແມ່ນທະນາຄານທຸລະກິດໃນ ສປປ ລາວ. ຮອດເດືອນ 9/2023 ຍອດສິນເຊື່ອຂະແໜງການທະນາຄານ ມີທັງໝົດ 163.378 ຕື້ກີບ ເພີ່ມຈາກ 85.564,05 ຕື້ກີບ ໃນເດືອນ 7/2021 (ກ່ອນຮັບຮອງວາລະແຫ່ງຊາດ; ໃນນັ້ນ, ຍອດສິນເຊື່ອທີ່ປ່ອຍໃຫ້ ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ມີທັງໝົດ 16.300,02 ຕື້ກີບ, ກວມ 10,42%. ໂດຍແຍກຕາມຂະແໜງການເສດຖະກິດມີດັ່ງນີ້: ❶ ຂະແໜງອຸດສາຫະກໍາ ຈໍານວນ 46.583,4 ຕື້ກີບ ກວມເອົາ 29,78%;❷ ຂະແໜງການຄ້າ ຈໍານວນ 29.752,17 ຕື້ກີບ ກວມເອົາ 19,02%;❸ ຂະແໜງກໍ່ສ້າງ ຈໍານວນ 22.753,81 ກວມເອົາ 14,53%;❹ ຂະແໜງບໍລິການ ຈໍານວນ 20.929,13 ຕື້ກີບ ກວມ 13,38%;❺ ຂະແໜງປະກອບວັດຖຸເຕັກນິກ ຈໍານວນ 5.870,69 ຕື້ກີບ ກວມ 3,75%; ❻ ຂະແໜງກະສິກໍາ-ປ່າໄມ້ ຈໍານວນ 7.630,56 ຕື້ກີບ ກວມ 4,88%; ❼ ຂະແໜງຂົນສົ່ງ-ໄປສະນີ ຈໍານວນ 3.003,48 ຕື້ກີບ ກວມ 1,92% ❽ ຂະແໜງຫັດຖະກໍາ ຈໍານວນ 152,92 ຕື້ກີບ ກວມ 0,10% ແລະ ❾ ຂະແໜງການອື່ນໆຈໍານວນ 19.771,84 ຕື້ກີບ ກວມ 12,64% ຂອງສິນເຊື່ອທັງໝົດ. ຊຶ່ງໂດຍລວມ ເຫັນວ່າ ບາງຂະແໜງການຍັງມີຕໍ່າ ເປັນຕົ້ນແມ່ນຂະແໜງກະສິກໍາ-ປ່າໄມ້.

**ນອກນັ້ນ,** ຍັງມີສິນເຊື່ອທີ່ປ່ອຍຜ່ານທະນາຄານນະໂຍບາຍ ຊຶ່ງມາຮອດເດືອນ 9/2023 ມີຍອດສິນເຊື່ອ 2.793, 57 ຕື້ກີບ ເພີ່ມຂຶ້ນຈາກຈໍານວນ 2.767,29 ຕື້ກີບ ເດືອນ 7/ 2021 (ກ່ອນຮັບຮອງວາລະແຫ່ງຊາດ) ຊຶ່ງເຂົ້າເຖິງຈໍານວນ 17 ແຂວງ, 1 ນະຄອນຫຼວງ ,121 ເມືອງ, 4.289 ບ້ານ (ບ້ານທຸກຍາກ 1.334 ບ້ານ), 35.603 ກຸ່ມ, 232.909 ຄອບຄົວ (ຄອບຄົວທຸກຍາກ 42.437 ຄອບຄົວ).

ພ້ອມກັນນີ້, ທ່ານຜູ້ວ່າການ ທຫລ ຍັງໄດ້ສະເໜີທິດທາງແຜນການ ປີ 2024 ໃນການທີ່ຈະເຮັດໃຫ້ອັດຕາແລກປ່ຽນມີສະເຖຍລະພາບ ແມ່ນຈະຕ້ອງສ້າງຄວາມສົມດູນດ້ານຄວາມຕ້ອງການ ແລະ ຄວາມສາມາດສະໜອງດ້ານເງິນຕາຕ່າງປະເທດ ຄື: ❶ ເພີ່ມລາຍຮັບເປັນເງິນຕາຕ່າງປະເທດເຂົ້າເສດຖະກິດ (ເພື່ອເພີ່ມເງິນຕາຕ່າງປະເທດເຂົ້າໃນລະບົບເສດຖະກິດໃຫ້ຫຼາຍຂຶ້ນຈະຕ້ອງໄດ້ສຸມໃສ່ການຄຸ້ມຄອງຕາມຂະແໜງເປັນຕົ້ນເງິນຕາຕ່າງປະເທດຈາກການສົ່ງອອກ, ການລົງທຶນໂດຍກົງຈາກຕ່າງປະເທດ (FDI), ການຊ່ວຍເຫຼືອຈາກຕ່າງປະເທດ (ODA), ການຊໍາລະ-ໃຊ້ຈ່າຍຂອງນັກທ່ອງທ່ຽວ, ການໂອນເງິນແຮງງານລາວກັບປະເທດ ໃຫ້ເຂົ້າຜ່ານລະບົບທະນາຄານ; ນອກນັ້ນ, ຕ້ອງໄດ້ສ້າງແຫຼ່ງເງິນຕາຕ່າງປະເທດໃຫ້ເພີ່ມຂຶ້ນ ເພື່ອສ້າງຄວາມເກີນດູນໃຫ້ແກ່ດຸນຊໍາລະກັບຕ່າງປະເທດ, ປະຕິຮູບ-ປັບໂຄງສ້າງເສດຖະກິດ ໂດຍການສ້າງແຜນແມ່ບົດພັດທະນາຂະແໜງການໂລຈິສະຕິກ, ທ່ອງທ່ຽວ, ກະສິກໍາ, ອຸດສະຫະກໍາປຸງແຕ່ງ, ແຮ່ທາດ ແລະ ພະລັງງານສະອາດ (ມີການສຶກສາ ສ້າງແຜນແມ່ບົດພັດທະນາ ໂດຍນໍາໃຊ້ບໍລິສັດທີ່ປຶກສາສາກົນມາຊ່ວຍ); ❷ ຫຼຸດຄວາມຕ້ອງການເງິນຕາຕ່າງປະເທດລົງ (ການຫຼຸດຄວາມຕ້ອງການ ແລະ ການນໍາໃຊ້ເງິນຕາຕ່າງປະເທດນັ້ນ ແມ່ນມີຫຼາຍມາດຕະການ ແລະການຮ່ວມມືຂອງບັນດາຂະແໜງການຕ່າງໆ ເຊັ່ນ: ມາດຕະການດ້ານອາກອນ (ອາກອນຊົມໃຊ້), ໂກຕ້າສິນຄ້າທີ່ບໍ່ຈໍາເປັນ; ກະຊວງການເງິນໃຊ້ມາດຕະການຢຸດການນໍາເຂົ້າສໍາລັບສິນຄ້າທີ່ສາມາດຜະລິດໄດ້; ພະລັງງານສະອາດ ຊ່ວຍຫຼຸດຜ່ອນການໃຊ້ນໍ້າມັນເຊື້ອໄຟ; ລະດົມສັງຄົມເປີດຂະບວນການຮັກຊາດພັດທະນາ ຫຼຸດການໃຊ້ສິນຄ້າ ແລະ ການບໍລິການຕ່າງປະເທດ; ❸ສ້າງກົນໄກການແລກປ່ຽນໃນລະບົບທະນາຄານໃຫ້ຄົບຊຸດບໍລິການໃຫ້ສັງຄົມຢ່າງທົ່ວເຖິງຕາມກົດໝາຍ ແລະ ເຂົ້າເຖິງງ່າຍ (ທະນາຄານທຸລະກິດຂະຫຍາຍການບໍລິ

ການແລກປ່ຽນເງິນຕາຕ່າງປະເທດດ້ວຍຫຼາຍຮູບແບບທັງໜ່ວຍບໍລິການແລກປ່ຽນ, ຕູ້ແລກປ່ຽນເງິນຕາຕ່າງປະເທດ ແລະ ຕູ້ກົດເງິນສົດເງິນຕາຕ່າງປະເທດອັດຕະໂນມັດຕາມຈຸດຍຸດທະສາດຕ່າງໆ, ພ້ອມທັງສ້າງເຄື່ອງມືແລກປ່ຽນທັນສະໄໝທີ່ແລກປ່ຽນດ້ວຍກັນເອງຂອງທະນາຄານການຄ້າ; ລະບົບແລກປ່ຽນພາຍໃນ, ຜູ້ສົ່ງອອກ-ນຳເຂົ້າ, ການລົງທຶນໂດຍກົງຈາກຕ່າງປະເທດ (FDI); ❹ ຈຳກັດການຄ້າຂາຍນອກລະບົບ, ການລັກລອບສິນຄ້າເຂົ້າປະເທດ.

ນອກຈາກນີ້, ຍັງມີຫຼາຍບັນຫາທີ່ທະນາຄານແຫ່ງ ສປປ ລາວ ຍັງຈະຕ້ອງເພີ່ມທະວີເອົາໃຈໃສ່ການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໂດຍສະເພາະຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ເລກທີ 10/ນຍ ເພື່ອໃຫ້ສັງຄົມເຂົ້າໃຈ ແລະ ຮ່ວມກັນຈັດຕັ້ງປະຕິບັດ ເຊັ່ນ: ການສ້າງຂະບວນການຮັກຊາດພັດທະນາທົ່ວສັງຄົມ ເພື່ອໃຫ້ທົ່ວສັງຄົມ ພາກລັດ-ທຸລະກິດ, ປະຊາຊົນ ພ້ອມພຽງກັນເຂົ້າໃຈບັນຫາ, ຮ່ວມກັນແກ້ບັນຫາ, ເສຍສະຫຼະປະໂຫຍດຈຳນວນໜຶ່ງຮ່ວມກັນ, ປະຢັດການໃຊ້ເງິນຕາ, ສົ່ງເສີມການຊົມໃຊ້ສິນຄ້າພາຍໃນ, ຊຸກຍູ້ການຜະລິດພາຍໃນ ຫັນປ່ຽນຈາກສັງຄົມຊົມໃຊ້ສິນຄ້າຕ່າງປະເທດຟູມເຟືອຍ ເປັນສັງຄົມນິຍົມຊາດ ສ້າງຄຸນຄ່າຂອງຊາດຕາມທິດສັງຄົມນິຍົມກຸ້ມຕົນເອງ.

**# ຂ່າວ: ທະນາຄານແຫ່ງ ສປປ ລາວ.**
**# ພາບ: ວັນປະເສີດ ສີມບູນຂັນ.**

**ເສດຖະກິດລາວຈະເຂັ້ມແຂງ ຖ້າປວງຊົນຮ່ວມແຮງນຳໃຊ້ເງິນກີບ**